PA
- ລົງກະດານຫ່ອ 8/8 2017

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 36 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 07 ສິງຫາ 2017

ສຳນັກງານ ຄຄຊ
ເລກທີ 0836
ວັນທີ 07 AUG 2017
ໂທລະສັບ 021 217770

ລາຍງານການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ
ປະຈຳອາທິດທີ 17-21/07/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

## I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 1,99% ທຽບເອີໂຣ ເນື່ອງຈາກການຕົວເລກຂໍ້ສະຫວັດດີການຕ່າງໆຂອງ ສະຫະລັດອາເມລິກາເພີ່ມຂຶ້ນ 1,98 ລ້ານຄົນ ໃນອາທິດຜ່ານມາ; ພ້ອມກັນນັ້ນ, ຕົວເລກດຸນບັນຊີຊຳລະປົກກະຕິຂອງສະຫະພາບເອີຣົບເກີນດຸນເພີ່ມຂຶ້ນເປັນ 30,1 ຕື້ເອີໂຣຂອງເດືອນ 05/2017 ຈາກເກີນດຸນ 23,5 ຕື້ເອີໂຣໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 10-14/07/2017 | ອາທິດນີ້ 17-21/07/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1413 | 1,1645 | -1,99% |
| ເຢນ/ໂດລາ | 113,23 | 111,58 | 1,48% |
| ບາດ/ໂດລາ | 33,86 | 33,45 | 1,23% |
| ເປໂຊ/ໂດລາ | 50,56 | 50,73 | -0,35% |
| ຣູເປັຍ/ໂດລາ | 13.337 | 13.312 | 0,19% |
| ໂດລາສິງກະໂປ/ໂດລາ | 1,3745 | 1,3642 | 0,76% |
| ຢວນ/ໂດລາ | 6,7833 | 6,7687 | 0,22% |

#### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນເພີ່ມຂຶ້ນ 1,62% ຈາກ 46,36 ໂດລາ/ບາເຣວ ມາເປັນ 47,11 ໂດລາ/ບາເຣວ ເນື່ອງຈາກຄວາມຕ້ອງການຊົມໃຊ້ນ້ຳມັນຂອງສະຫະລັດເພີ່ມຂຶ້ນ ຊຶ່ງເຫັນໄດ້ຈາກຄັງສຳຮອງນ້ຳມັນດິບຂອງສະຫະລັດອາເມລິກາ ຫຼຸດລົງ 4,73 ລ້ານບາເຣວ ຂອງອາທິດທີ 14/07/2017 ຈາກຫຼຸດລົງ 7,56 ລ້ານບາເຣວໃນອາທິດຜ່ານມາ;
- ສຳລັບລາຄາຄຳເພີ່ມຂຶ້ນ 2,36% ຈາກ 1.219,36 ໂດລາ/ອອນ ມາເປັນ 1.248,11 ໂດລາ/ອອນ ເນື່ອງຈາກນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພີ່ມຂຶ້ນ ເພື່ອປ້ອງກັນຄວາມສ່ຽງຈາກຄວາມຜັນຜວນຂອງຄ່າເງິນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,08% ແຕ່ອ່ອນຄ່າ 0,66% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າ 0,67% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າ 6,18% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 10-14/06/2017 | | | ອາທິດນີ້ 17-21/07/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.388,30 | 8.410,98 | 8.398,21 | 8.384,16 | 8.404,90 | 8.391,80 | 0,05% | 0,07% | 0,08% | -0,80% | -0,60% | -0,67% |
| ບາດ | 247,53 | 248,92 | 248,40 | 249,00 | 250,53 | 250,04 | -0,59% | -0,64% | -0,66% | -6,19% | -6,16% | -6,18% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 0,17% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 29,83%;
- ປະລິມານເງິນ M2 ຫຼຸດລົງ 0,47% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 18,82%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (14-20/07/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 28,27 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 53,92 ລ້ານໂດລາ ແລະ ຂາຍໂດລາໄດ້ 25,65 ລ້ານໂດລາ) ແຕ່ ຂາຍເງິນບາດສຸດທິ 860,85 ລ້ານບາດ (ໃນນີ້ ຊື້ບາດໄດ້ 408,64 ລ້ານບາດ ແລະ ຂາຍບາດໄດ້ 1.269,49 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າເງິນໂດລາເພີ່ມຂຶ້ນ 19,28% ແຕ່ ເງິນບາດຫຼຸດລົງ 17,98%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈຳນວນ 12 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 73 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 0,40 ລ້ານໂດລາສະຫະລັດ ແລະ ເງິນບາດຈຳນວນ 40,49 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈຳນວນ 0,32 ລ້ານໂດລາ ສ່ວນເງິນບາດແມ່ນບໍ່ມີການເຄື່ອນໄຫວ.

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

สะพาบภาม ຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 07-13/07/2017 | | ອາທິດທີ 14-20/07/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **46,26** | **310,58** | **53,92** | **408,64** | **16,56%** | **31,57%** |
| - ທ/ຄທຸລະກິດລັດ | 7,85 | 139,23 | 6,61 | 70,35 | -15,80% | -49,47% |
| - ທ/ຄທຸລະກິດອື່ນໆ | 38,41 | 171,35 | 47,31 | 338,29 | 23,17% | 97,43% |
| **2. ການຂາຍເງິນຕາຕ່າງປະເທດ** | **20,45** | **1.735,39** | **25,65** | **1.269,49** | **25,43%** | **-26,85%** |
| - ທ/ຄທຸລະກິດລັດ | 9,87 | 372,20 | 8,13 | 92,63 | -17,63% | -75,11% |
| - ທ/ຄທຸລະກິດອື່ນໆ | 10,58 | 1.363,19 | 17,52 | 1.176,86 | 65,60% | -13,67% |
| **ຊື້-ຂາຍສຸດທິ ທທກ** | **25,81** | **-1.424,81** | **28,27** | **-860,85** | **9,53%** | **-39,58%** |
| - ຜິດດ່ຽງ ຊື້-ຂາຍ | 55,79% | -458,76% | 52,43% | -210,66% | -6,02% | -54,08% |
| - ມູນຄ່າການຊື້-ຂາຍ | **66,71** | **2.045,97** | **79,57** | **1.678,13** | **19,28%** | **-17,98%** |
| **3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **-7,50** | **-214,00** | **-12,00** | **-73,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 7,50 | 214,00 | 12,00 | 73,00 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **0,20** | **52,07** | **0,40** | **40,49** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **0,11** | **0,00** | **-0,32** | **0,00** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,11 | 0,00 | 0,08 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,40 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 07/2017 ຄາດວ່າຢູ່ໃນລະດັບ 0,21% ຫຼຸດລົງຈາກ 0,41% ທຽບໃສ່ເດືອນ 06/2017.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດ ໃນອາທິດນີ້ ເພີ່ມຂຶ້ນ 68,3% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 133,78 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 64,1% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 65,5 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 827 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 50 ສະບັບ ເທົ່າກັບ 6,43% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 313, 09 ຕື້ກີບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 171,72 ຕື້ກີບ ເທົ່າກັບ 35,42% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (14-20/07/2017) ມີທັງໝົດ 2.288 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 2.246 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ 106,40 ຕື້ກີບ ຈາກ 966,58 ຕື້ກີບ ມາເປັນ 860,18 ຕື້ກີບ ເທົ່າກັບ 11%;

- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 42 ຄັ້ງ, ມູນຄ່າການໂອນໃນອາທິດ ເພີ່ມຂຶ້ນ 142,48 ຕື້ກີບ ຈາກ 70,09 ຕື້ກີບ ມາເປັນ 212,57 ຕື້ກີບ ເທົ່າກັບ 203,28%.

4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.029,23 ຈຸດ ເພີ່ມຂຶ້ນ 0,67% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 54.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 292,47 ລ້ານກີບ ເພີ່ມຂຶ້ນ 62,62% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 32,78% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 10-14/07/2017 | ດັດຊະນີອາທິດທີ 17-21/07/2017 | (ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.022,38 | 1.029,23 | 0,67 | |

ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX) (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ(ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການ ຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 17.700 | 97.885.000 | 5.530 | 30.600 | 169.365.000 | 5.535 | 72,88 | 73,02 | 5 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 16.300 | 81.970.000 | 5.029 | 24.100 | 122.910.000 | 5.100 | 47,85 | 49,95 | 71 |
| ບໍລິສັດລາວເວີນ ມະຫາຊົນ | - | - | 7.550 | - | - | 7.550 | - | - | - |
| ບໍລິສັດປີໂຕລ້ຽມເທລດດິ້ງລາວ ມະຫາຊົນ | - | - | 2.000 | 100 | 200.000 | 2.000 | - | - | - |
| ບໍລິສັດສູວັນນີໂຮມເຊັນເຕີ ມະຫາຊົນ | - | - | 2.900 | - | - | 2.900 | - | - | - |
| ທັງໝົດ | 34.000 | 179.855.000 | 5.290 | 54.800 | 292.475.000 | 5.337 | 61,18 | 62,62 | |

3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສຳເລັດການຈັດກອງປະຊຸມ ແລະ ສຳມະນາຕ່າງໆ: ❶ ກອງປະຊຸມຄະນະຮັບຜິດຊອບການຈັດຕັ້ງປະຕິບັດຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການປະຢັດລາຍຈ່າຍງົບປະມານຢູ່ຂົງເຂດທະນາຄານ ທີ່ (ທຫລ); ❷ ກອງປະຊຸມຄະ

ນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ II ປະຈຳປີ 2017 ທີ່ (ທຫລ) ແລະ ❸ ຈັດກອງປະຊຸມ ປຶກສາຫາລືກ່ຽວກັບ ການພິຈາລະນາອະນຸມັດແຜນໂຄງການທົດລອງຜະລິດຕະພັນ U-money ຂອງບໍລິສັດ ສະຕາໂທລະຄົມ;

- ສຳເລັດການເດີນທາງໄປເຂົ້າຮ່ວມງານພົບປະແລກປ່ຽນທາງດ້ານວິຊາການ, ວັດທະນະທຳ ແລະ ກິລາ ປະຈຳປີ ລະຫວ່າງ ທຫລ ແລະ ທຫວ ຢູ່ປະເທດ ສສ. ຫວຽດນາມ ໃນລະຫວ່າງວັນທີ 17-21 ກໍລະກົດ 2017;
- ສຳເລັດການຈັດປາຖະຖະຖາ ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 62 ປີ;
- ສຳເລັດການຈັດງານເປີດໂລກແຫ່ງການລົງທຶນ ໃນຫົວຂໍ້: ທຸລະກິດຍືນຍົງ ສ້າງຖານະໝັ້ນຄົງໃນຕະຫຼາດທຶນ;
- ສຳເລັດການອອກແບບບົດແນະນຳບັນທຶກບັນຊີກ່ຽວກັບຫຼຽນທີ່ລະນຶກ ແລະ ທະນາບັດທີ່ລະນຶກ ສຳລັບ ທະນາຄານແຫ່ງ ສປປ ລາວ;
- ສຳເລັດການກະກຽມຄວາມພ້ອມຕ່າງໆໃຫ້ແກ່ການເປີດ ທຫລ ພາກເໜືອ ທີ່ແຂວງຊຽງຂວາງ.

## III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;
- **ກະກຽມຈັດກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນ ກໍລະກົດ 2017 ທີ່ (ຫສນຍ); ❷ ກອງປະຊຸມສົ່ງເສີມການຮ່ວມມືໃນການຕ້ານທະນະບັດປອມຢູ່ໃນປະເທດ ກຳປູເຈຍ, ລາວ ແລະ ຫວຽດນາມ (ຢູ່ປະເທດ ຫວຽດນາມ); ❸ ກອງປະຊຸມ ລາຍງານກ່ຽວກັບການປະເມີນການປະຕິບັດວຽກງານຂອງພະນັກງານປະຈຳປີ 2016 ທີ່ (ທຫລ) ແລະ ❹ ກອງປະຊຸມຄະນະຮັບຜິດຊອບຮ່າງດຳລັດ CIB ທີ່ (ທຫລ);
- **ກະກຽມຈັດກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມປຶກສາຫາລືກ່ຽວກັບການປັບປຸງຮ່າງດຳລັດວ່າດ້ວຍທຸລະກິດເຊົ່າສິນເຊື່ອ ຢູ່ (ກະຊວງຍຸຕິທຳ); ❷ ກອງປະຊຸມຄົ້ງປະຖົມມະລຶກຂອງຄະນະກຳມະທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງ ແມ່ຍິງ ແລະ ແມ່-ເດັກ ປະຈຳປີ2017 ຢູ່(ໂຮງແຮມແລນມາກ); ❸ ກອງປະຊຸມປຶກສາຫາລືຮ່ວມກັນລະຫວ່າງ ທຫລ ແລະ ກະຊວງການເງິນ ກ່ຽວກັບແຜນການພັດທະນາລະບົບຊຳລະສະສາງແຫ່ງຊາດ ແລະ ❹ ກະກຽມຈັດຝຶກອົບຮົມວຽກງານການກວດກາ ສະຫະກອນ ໃຫ້ແກ່ພະນັກງານທະນາຄານແຫ່ງ ສປປ ລາວ ໃນລະຫວ່າງວັນທີ 24-27 ກໍລະກົດ 2017;
- ຄະນະຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍຄະນະ ກະກຽມເດີນທາງໄປວຽກທາງລັດຖະການຢູ່ແຂວງຊຽງຂວາງ ເພື່ອເປີດ ສາຂາທຫລ ປະຈຳແຂວງ ຊຽງຂວາງ;
- ສືບຕໍ່ປັບປຸງຮ່າງຂໍ້ຕົກລົງວ່າດ້ວຍການກຳນົດລາຄາຮຸ້ນ, ຮ່າງຂໍ້ຕົກລົງວ່າດ້ວຍຕົວແທນຜູ້ຖືຮຸ້ນກູ້ (ໃໝ່), ຮ່າງຂໍ້ຕົກລົງວ່າດ້ວຍຕົວແທນຂຶ້ນທະບຽນຮຸ້ນກູ້ (ໃໝ່) ແລະ ຮ່າງຂໍ້ຕົກລົງວ່າດ້ວຍການຄອບຄອງຈິດຈະການ (ໃໝ່);

ຫົວໜ້າຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ